# ຕອບສາຍດ່ວນ 1518 ກະຊວງໂຍທາທິການ ແລະ ຂົນສົ່ງ

ໃນໄລຍະຜ່ານມາມີປະຊາຊົນໄດ້ສົ່ງຂ່າວຫາຂະແໜງ ຍທຂ ຜ່ານທາງສາຍດ່ວນ 1518 ກະຊວງໂຍທາທິການ ແລະ ຂົນສົ່ງ ໃນນັ້ນມີ 2 ບັນຫາ ເຊິ່ງຕິດພັນກັບພະແນກ ຍທຂ ແຂວງຈຳປາສັກ ດັ່ງນີ້:

<u>ບັນຫາທີ1</u>: ປະຊາຊົນບ້ານໂພໄຊ ເມືອງໂພນທອງ ແຂວງຈຳປາສັກ ຂໍໃຫ້ທາງຂັ້ນເທິງລົງກວດກາຕິດຕາມຊ່ວຍເລື່ອງການເຮັດກັນເຈື່ອນ ທີ່ເມືອງໂພນທອງ ທີ່ທາງບໍລິສັດຈຳປາຄຳ ໄດ້ລົງມືກໍ່ສ້າງໂດຍ ທີ່ທາງຜູ້ຮັບຜິດຊອບກໍ່ບໍ່ໄດ້ແຈ້ງໃຫ້ປະຊາຊົນຮັບຊາບ, ເຮັດໃຫ້ປະຊາຊົນເຂດດັ່ງກ່າວໄດ້ຮັບຄວາມຫຍຸ້ງຍາກ.

<u>ບັນຫາທີ2</u>: ປະຊາຊົນແຂວງຈຳປາສັກ, ຝາກຖາມເຖິງພາກສ່ວນທີ່ກ່ຽວຂອງເລື່ອງການເຮັດທົ່ນທາງແຕ່ປາກເຊ-ປາກຊອງຂອງບໍລິສັດດວງດີ, ຖ້າເຮັດແລ້ວປະຊາຊົນຕ້ອງໄດ້ເສຍຄ່າຜ່ານທາງຄື ກັບເສັ້ນທາງວັດພູ-ວັງເຕົາອີກບໍ່, ປະຊາຊົນກໍ່ໄດ້ເສຍຄ່າທາງເປັນປີແລ້ວເປັນຫຍັງຈິ່ງມາເກັບຄ່າທາງອີກ.

ຕໍ່ກັບບັນຫາດັ່ງກ່າວທີມງານສາຍດ່ວນ 1518 ກະຊວງ ຍທຂ, ໄດ້ປະສານຫາພາກສ່ວນກ່ຽວຂ້ອງໂດຍສະເພາະແມ່ນ ພະແນກ ຍທຂ ແຂວງຈຳປາສັກ ໃຫ້ຮູ້ວ່າ:

1. **<u>ຕໍ່ກັບບັນຫາທີ1</u>:** ໂຄງການພັດທະນາແຄມຂອງທີ່ເມືອງໂພນທອງ ແຂວງຈຳປາສັກນັ້ນ ຄະນະໄກ່ເກ່ຍສິ່ງກີດຂວາງຂອງໂຄງການດັ່ງກ່າວໄດ້ປຶກສາຫາລືກັບເຈົ້າຂອງເຮືອນ, ດິນ, ຮົ້ວ, ສວນ ແລະ ອື່ນໆ ທີ່ຖືກກະທົບຈາກໂຄງການ, ຕາມແຈ້ງການຂອງເຈົ້າແຂວງຈຳປາສັກ, **ສະບັບເລກທີ 16/ຈຂ.ຈສ, ລົງວັນທີ 9/8/2017** , ເລື່ອງກະກຽມຍ້າຍສິ່ງກີດຂວາງຕ່າງໆທີ່ຖືກກະທົບຈາກໂຄງການພັດທະນາແຄມຂອງເມືອງປາກເຊ ແລະ ເມືອງໂພນທອງ ຕາມລຳນ້ຳຂອງ ແລະນ້ຳເຊໂດນ, ໃນວັນທີ 18/12/2017 ການນຳຂອງເມືອງໂພນທອງ ກໍ່ໄດ້ເຊີນການນຳຂອງກຸ່ມບ້ານ, ການນຳຂອງບ້ານ ແລະ ປະຊາຊົນຜູ້ທີ່ຄາດວ່າຈະຖືກຜົນກະທົບເຂົ້າຮ່ວມປຶກສາຫາລືກ່ຽວກັບວຽກຍົກຍ້າຍສິ່ງກີດຂວາງຕ່າງໆ ທີ່ຖືກກະທົບຈາກໂຄງການ, ພ້ອມດຽວກັນຄະນະກຳມະການໄກ່ເກ່ຍໄດ້ລົງສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນຜົນກະທົບເພື່ອເປັນບ່ອນອີງໃຫ້ແກ່ການຊົດເຊີຍ ແລະ ບໍລິສັດຮັບເໝົາກໍໄດ້ຈັດຕັ້ງປະຕິບັດວຽກບຸກເບີກແລວໂຄງການ, ເຊິ່ງວຽກກໍ່ສ້າງຈຳນວນໜຶ່ງທີ່ຈະຕ້ອງປະຕິບັດຢູ່ບ່ອນມີຜົນກະທົບນັ້ນ ແມ່ນຈະຕ້ອງສຳເລັດການໄກ່ເກ່ຍຊົດເຊີຍກ່ອນ ຈຶ່ງຈະລົງມືປະຕິບັດ, ສະນັ້ນຕໍ່ກັບຄຳຖາມຂອງພໍ່ແມ່ປະຊາຊົນບ້ານໂພນໄຊຜ່ານທາງສາຍດ່ວນ 1518 ນັ້ນເພິ່ນອາດຈະຍັງບໍ່ທັນເຂົ້າໃຈຈະແຈ້ງເທື່ອຕໍ່ວຽກດັ່ງກ່າວ.

**2. <u>ຕໍ່ກັບບັນຫາທີ2</u>:** ການຂະຫຍາຍທາງປາກເຊ-ປາກຊ່ອງ ຈາກ 2 ເລນມາເປັນທາງ 4 ເລນນັ້ນ ປະຈຸບັນ ບໍລິສັດຜູ້ຮັບເໝົາໄດ້ເລີ່ມຈັດຕັ້ງປະຕິບັດວຽກຂະຫຍາຍທາງດັ່ງກ່າວສຳເລັດ 50%, ໃນໄລຍະປະຕິບັດໂຄງການ ກໍ່ໄດ້ມີຫລາຍທາງສຽງຈາກສັງຄົມຕໍ່ກັບການຄາດວ່າຈະເກັບຄ່າຜ່ານທາງຊ່ວງ ດັ່ງກ່າວ ໃນວັນທີ 7/4/2017 ກໍ່ໄດ້ມີກອງປະຊຸມຄົ້ນຄວ້າປຶກສາຫາລືກ່ຽວກັບການກຳນົດລາຄາຜ່ານທາງດັ່ງກ່າວ, ໂດຍການເປັນປະທານຂອງເຈົ້າແຂວງຈຳປະສັກ ພ້ອມການນຳຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ. ບັນຫາວ່າ ຈະເກັບຄ່າຜ່ານທາງຫລືບໍ່ເກັບຄ່າຜ່ານທາງຊ່ວງດັ່ງກ່າວແມ່ນຈະໄດ້ແຕ່ງຕັ້ງຄະນະກຳມະການລົງກວດກາປະເມີນຄ່າໂຄງການ, ເກັບກຳສະຖິຕິຈຳນວນລົດຜ່ານ, ຈາກນັ້ນຈະໄດ້ລາຍງານລັດຖະບານ ເພື່ອມີທິດຊີ້ນຳ ຖ້າລັດຖະບານບໍ່ເຫັນດີໃຫ້ເກັບກໍ່ຈະບໍ່ໄດ້ເກັບຄ່າຜ່ານທາງອີກ.

ເບິ່ງລວມແລ້ວທັງ 2 ໂຄງການກໍ່ລ້ວນແຕ່ປະຕິບັດຕາມຂັ້ນຕອນ, ຕາມລະບຽບຫລັກການທຸກຢ່າງ ຈຸດປະສົງກໍ່ເພື່ອສ້າງຄວາມສະດວກສະບາຍໃຫ້ແກ່ພໍ່ແມ່ປະຊາຊົນ ແລະ ໄດ້ຮັບການຊົດເຊີຍຢ່າງສົມເຫດສົມຜົນ. ສະນັ້ນ ກໍ່ຂໍໃຫ້ປະຊາຊົນໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງ ກ່າວເຂົ້າໃຈດ້ວຍ.